ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ: 0121/ກງ

ນະຄອນຫຼວງວຽງຈັນ, ວັນທີ: 18 ມັງກອນ 2022

# ຄຳແນະນຳ
# ວ່າດ້ວຍມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ສັນຍາວ່າດ້ວຍການຄ້າ ທີ່ຕິດພັນກັບສິດຊັບສິນທາງປັນຍາ (Agreement on Trade-Related Aspects of Intellectual Property Rights-TRIPS).
- ອີງຕາມ ການຄົ້ນຄ້ວາ ນຳສະເໜີຂອງ ກົມພາສີ ສະບັບ ເລກທີ 07544/ກພສ. ລົງວັນທີ 29 ທັນວາ 2021

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຄຳແນະນຳສະບັບນີ້ ກຳນົດລະບຽບການ ແລະ ຂັ້ນຕອນ ກ່ຽວກັບການຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ແລະ ຄຳຮ້ອງຂໍກັກສິນຄ້າຊົ່ວຄາວ, ການກວດກາສິນຄ້າທີ່ລະເມີດສິດຕໍ່ຊັບສິນທາງປັນຍາ, ການປະຕິບັດສິດໂດຍໜ້າທີ່ (Ex-officio), ການປະຕິບັດຄຳຕັດສິນຂອງສານ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການປົກປ້ອງສິດຕໍ່ຊັບສິນທາງປັນຍາ.**

ການປົກປ້ອງສິດຕໍ່ຊັບສິນທາງປັນຍາ ແມ່ນ ປະຕິບັດມາດຕະການຕໍ່ຜູ້ລະເມີດສິດຕໍ່ຊັບສິນທາງປັນຍາ ບົນພື້ນຖານການຮ້ອງຂໍຈາກຜູ້ຖືສິດ/ເຈົ້າຂອງສິດ, ຊຶ່ງມາດຕະການດັ່ງກ່າວນີ້ ຈະນຳໃຊ້ສະເພາະແຕ່ ສິນຄ້າປອມແປງເຄື່ອງໝາຍການຄ້າ, ສິນຄ້າລະເມີດລິຂະສິດ ແລະ ສິນຄ້າລະເມີດແບບອຸດສາຫະກຳ ໂດຍປະຕິບັດຕາມລະບຽບ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້.

ການປົກປ້ອງສິດຕໍ່ຊັບສິນທາງປັນຍາ ພາຍໃຕ້ຄໍາແນະນໍາສະບັບນີ້ ຈະບໍ່ນໍາໃຊ້ກັບການນໍາເຂົ້າ ແລະ ການສົ່ງອອກສິນຄ້າ ຈໍານວນໜ້ອຍ ທີ່ບໍ່ມີລັກສະນະທາງການຄ້າ ແລະ ທີ່ບໍ່ເປັນອາຈິນ.

ມາດຕາ 3 ການອະທິບາຍສັບ

ຄໍາສັບທີ່ນໍາໃຊ້ໃນຄໍາແນະນໍາສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ເຈົ້າໜ້າທີ່ພາສີ ໝາຍເຖິງ ພະນັກງານພາສີ ທີ່ຖືກແຕ່ງຕັ້ງ ໃຫ້ປະຕິບັດໜ້າທີ່ປະຈໍາການຢູ່ ດ່ານພາສີຊາຍແດນ, ພາສີປະຈໍາແຂວງ, ນະຄອນຫຼວງ, ກອງສືບສວນ-ສອບສວນ ແລະ ປາບປາມການຄ້າຂາຍເຖື່ອນປະຈໍາພາກ, ແລະ ຜູ້ປະຕິບັດວຽກງານສະເພາະກິດໃດໜຶ່ງຂອງພາສີ.
2. ສິດຕໍ່ຊັບສິນທາງປັນຍາ ໝາຍເຖິງ ສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນທາງປັນຍາ
3. ຜູ້ຖືສິດ/ເຈົ້າຂອງສິດ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຄຸ້ມຄອງຕາມກົດໝາຍ ກ່ຽວກັບຊັບສິນທາງປັນຍາ;
4. ເຈົ້າຂອງສິນຄ້າ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ ທີ່ເປັນຜູ້ຮັບຜິດຊອບຕໍ່ສິນຄ້າ ຕາມການມອບສິດ ຫຼື ຕາມການມອບໝາຍຂອງຜູ້ຖືກໍາມະສິດ.
5. ຜູ້ຮ້ອງຂໍ ໝາຍເຖິງ ເຈົ້າຂອງສິດ, ຜູ້ຖືສິດ, ຜູ້ທີ່ໄດ້ຮັບອະນຸຍາດນໍາໃຊ້ ຕໍ່ຊັບສິນທາງປັນຍາ ຫຼື ຜູ້ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ທີ່ຍື່ນສໍານວນຄໍາຮ້ອງຂໍ ແຈ້ງຂໍ້ມູນການເປັນເຈົ້າຂອງສິດ ແລະ ຂໍການປົກປ້ອງຊົ່ວຄາວຕໍ່ຊັບສິນທາງປັນຍາ ຕໍ່ລັດຖະການພາສີ.
6. ຄໍາຮ້ອງ ໝາຍເຖິງ ສໍານວນເອກະສານ ທີ່ຍື່ນຕໍ່ລັດຖະການພາສີ ເພື່ອຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ແລະ ຄໍາຮ້ອງຂໍກັກສິນຄ້າຊົ່ວຄາວຕໍ່ສິດຊັບສິນທາງປັນຍາ ຕາມແບບພິມທີ່ລັດຖະການພາສີກໍານົດ;
7. ສິນຄ້າທີ່ສົງໃສມີການລະເມີດສິດຕໍ່ຊັບສິນທາງປັນຍາ ໝາຍເຖິງ ສິນຄ້າທີ່ມີສິ່ງບົ່ງຊີ້ຢ່າງສົມເຫດສົມຜົນວ່າ ມີການລະເມີດສິດຕໍ່ຊັບສິນທາງປັນຍາ.
8. ການກັກ ໝາຍເຖິງ ການຮັກສາສິນຄ້າ, ເຄື່ອງຂອງໄວ້ຊົ່ວຄາວ ທີ່ສົງໃສມີການລະເມີດສິດຕໍ່ຊັບສິນທາງປັນຍາ ເພື່ອລໍຖ້າຜົນການກວດສອບຂອງລັດຖະການພາສີ.
9. ສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ ໝາຍເຖິງ ສິນຄ້າໃດໜຶ່ງ (ລວມທັງ ສິ່ງຫຸ້ມຫໍ່) ທີ່ໃສ່ເຄື່ອງໝາຍການຄ້າທີ່ຄືກັນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ທີ່ບໍ່ສາມາດຈໍາແນກຄວາມແຕກຕ່າງດ້ານລັກສະນະສະເພາະ ຈາກເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ ແລະ ຈະຖືວ່າເປັນການລະເມີດສິດຂອງເຈົ້າຂອງເຄື່ອງໝາຍການຄ້າ ດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ.
10. ສິນຄ້າທີ່ລະເມີດລິຂະສິດ ໝາຍເຖິງ ສິນຄ້າໃດໜຶ່ງ ທີ່ເປັນສໍາເນົາຊຶ່ງເຮັດຂຶ້ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດ ແລະ ສິນຄ້າໃດໜຶ່ງທີ່ເຮັດຂຶ້ນໂດຍກົງ ຫຼື ທາງອ້ອມ ທີ່ຖືເປັນການລະເມີດລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ.
11. ສິນຄ້າລະເມີດແບບອຸດສາຫະກໍາ ໝາຍເຖິງ ວັດຖຸທີ່ນໍາໃຊ້ແບບອຸດສາຫະກໍາ ຫຼື ຮູບຊົງແບບອຸດສາຫະກໍາ ຊຶ່ງເປັນການກ່າຍແບບ ຫຼື ການລອກຮຽນແບບອຸດສາຫະກໍາທີ່ໄດ້ຮັບການປົກປ້ອງ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ.

# ໝວດທີ 2
# ຂັ້ນຕອນການຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ

**ມາດຕາ 4 ບຸກຄົນທີ່ມີສິດຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ເປັນເຈົ້າຂອງສິດ, ຜູ້ຖືສິດ ຫຼື ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ ສິດຕໍ່ຊັບສິນທາງປັນຍາ ສາມາດຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 5 ຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ**

ຄຳຮ້ອງຂໍ ແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ປະກອບດ້ວຍ ເອກະສານດັ່ງລຸ່ມນີ້:

1. ຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ ຕາມແບບພິມລັດຖະການພາສີກຳນົດ;
2. ສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຫຼື ແບບອຸດສາຫະກຳ ຫຼື ສິດຊັບສິນທາງປັນຍາອື່ນໆ;
3. ຫຼັກຖານຢັ້ງຢືນກ່ຽວກັບຜູ້ຮ້ອງຂໍເປັນຜູ້ຖືສິດ, ຜູ້ໄດ້ຮັບອະນຸຍາດນຳໃຊ້ ສິດຕໍ່ຊັບສິນທາງປັນຍາ ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ;
4. ຮູບພາບ, ຮູບຖ່າຍ, ຫລື ແບບຢ່າງສິນຄ້າແທ້ ແລະ ສິນຄ້າລະເມີດສິດຕໍ່ຊັບສິນທາງປັນຍາ ຫຼື ຂໍ້ມູນຫຼັກຖານອື່ນໆ ທີ່ຊ່ວຍໃຫ້ເຈົ້າໜ້າທີ່ ສາມາດຈຳແນກໄດ້ລະຫວ່າງ ສິນຄ້າຂອງແທ້ ແລະ ສິນຄ້າທີ່ລະເມີດສິດຕໍ່ຊັບສິນທາງປັນຍາ;
5. ຂໍ້ມູນກ່ຽວກັບຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ລວມທັງລາຍຊື່ຜູ້ຕ້ອງສົງໃສ ທີ່ລະເມີດສິດຕໍ່ຊັບສິນທາງປັນຍາ; (ຖ້າມີ).

**ມາດຕາ 6 ຂັ້ນຕອນການຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ**

ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງຄຳແນະນຳສະບັບນີ້ ທີ່ມີຈຸດປະສົງຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ ສາມາດຍື່ນຄຳຮ້ອງຕໍ່ກົມພາສີ ຫຼື ພາສີປະຈຳແຂວງ, ນະຄອນຫຼວງ ຕາມແບບພິມລັດຖະການພາສີກຳນົດ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ ຢ່າງໜ້ອຍຕ້ອງປະກອບດ້ວຍ ສຳນວນເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ເຖິງ 4 ມາດຕາ 5 ຂອງຂໍ້ຄຳແນະນຳສະບັບນີ້;
2. ກົມພາສີ ຕ້ອງຮັບເອົາຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ ໃນກໍລະນີທີ່ປະຕິບັດໄດ້ຕາມເງື່ອນໄຂຂອງ ຂໍ້ 1 ຂ້າງເທິງ;
3. ໃນກໍລະນີ ທີ່ຍື່ນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດ ຜ່ານ ພາສີປະຈຳແຂວງ, ນະຄອນຫຼວງ ຕ້ອງຮັບເອົາຄຳຮ້ອງ ແລະ ອອກໃບຮັບຄຳຮ້ອງ ຊຶ່ງລະບຸ ວັນທີຮັບຄຳຮ້ອງ ໃນກໍລະນີທີ່ຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂດັ່ງທີ່ໄດ້ກຳນົດຢູ່ໃນ ຂໍ້ 1 ຂອງມາດຕານີ້ ແລ້ວສົ່ງຕໍ່ໃຫ້ກົມພາສີ ເພື່ອດຳເນີນການຂັ້ນຕໍ່ໄປ.

**ມາດຕາ 7 ການຮັບ ຫຼື ການປະຕິເສດຄຳຮ້ອງ**

ພາຍຫຼັງ ໄດ້ຮັບສຳນວນຄຳຮ້ອງທີ່ຖືກຕ້ອງ ແລະ ຄົບຖ້ວນ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຄຳແນະນຳ

ສະບັບນີ້, ພາຍໃນກຳນົດສິບ (10) ວັນລັດຖະການ ນັບແຕ່ມື້ໄດ້ຮັບສຳນວນຄຳຮ້ອງ, ລັດຖະການພາສີຕ້ອງ ຄົ້ນຄ້ວາ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນສຳນວນຄຳຮ້ອງຮັບຊາບວ່າ ສຳນວນຄຳຮ້ອງທີ່ຍື່ນມານັ້ນຖືກຮັບຮອງ ຫຼື ບໍ່. ໃນກໍລະນີ ລັດຖະການພາສີ ຫາກປະຕິເສດຄຳຮ້ອງດັ່ງກ່າວ ຕ້ອງແຈ້ງພ້ອມດ້ວຍເຫດຜົນໃຫ້ຜູ້ຍື່ນຄຳຮ້ອງຮັບຊາບ.

**ມາດຕາ 8 ການບັນທຶກການແຈ້ງຂໍ້ມູນການເປັນເຈົ້າຂອງສິດ**

ພາຍຫຼັງທີ່ລັດຖະການພາສີ ໄດ້ແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນສຳນວນຄຳຮ້ອງຮັບຊາບວ່າ ສຳນວນຄຳຮ້ອງທີ່ຍື່ນມານັ້ນຖືກຮັບຮອງແລ້ວ, ຕ້ອງສົ່ງສະໂນດນຳສົ່ງ ທີ່ ຕິດຄັດສຳເນົາຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ແລະ ເອກະສານປະກອບ ໃຫ້ ພາສີປະຈຳແຂວງ, ນະຄອນຫຼວງ ເພື່ອບັນທຶກເຂົ້າຖານຂໍ້ມູນບໍລິຫານຄວາມສ່ຽງ ແລະ ເປັນບ່ອນອີງໃນການກວດກາສິນຄ້າລະເມີດຊັບສິນທາງປັນຍາ.

**ມາດຕາ 9 ໄລຍະເວລາການປົກປ້ອງ**

ການບັນທຶກສຳນວນຄຳຮ້ອງຂໍການປົກປ້ອງສິດຕໍ່ຊັບສິນທາງປັນຍາຂອງເຈົ້າໜ້າທີ່ພາສີ ມີຜົນສັກສິດນັບແຕ່ມື້ກົມພາສີຮັບສຳນວນຄຳຮ້ອງການບັນທຶກເປັນຕົ້ນໄປ. ໄລຍະເວລາການປົກປ້ອງການບັນທຶກສຳນວນຄຳຮ້ອງ ແມ່ນ 2 ປີ ແລະ ສາມາດຂະຫຍາຍໄດ້ຕື່ມ ຕາມການຮ້ອງຂໍຂອງຜູ້ຍື່ນຄຳຮ້ອງ.

**ມາດຕາ 10 ການດັດແກ້ ຫຼື ເພີ່ມເຕີມຂໍ້ມູນໃນສຳນວນຄຳຮ້ອງ**

ຜູ້ຮ້ອງຂໍສາມາດ ດັດແກ້ ຫຼື ເພີ່ມເຕີມຂໍ້ມູນຢູ່ໃນສຳນວນຄຳຮ້ອງຂໍແຈ້ງຂໍ້ມູນການເປັນເຈົ້າຂອງສິດຂອງຕົນໄດ້ຕະຫລອດໄລຍະອາຍຸການປົກປ້ອງສິດຊັບສິນທາງປັນຍາ ໂດຍການຍື່ນຄຳຮ້ອງເຖິງກົມພາສີ.

**ມາດຕາ 11 ການສິ້ນສຸດອາຍຸສຳນວນຄຳຮ້ອງ**

ກົມພາສີຕ້ອງຍົກເລີກການບັນທຶກສຳນວນຄຳຮ້ອງຂໍການປົກປ້ອງສິດຕໍ່ຊັບສິນທາງປັນຍາ ຕາມກໍລະນີ ດັ່ງນີ້:

1. ຜູ້ຮ້ອງຂໍ ໄດ້ຍື່ນຄຳຮ້ອງຂໍເຖິງລັດຖະການພາສີເພື່ອຍົກເລີກການປົກປ້ອງສິດຕໍ່ຊັບສິນທາງປັນຍາ;
2. ຜູ້ຮ້ອງຂໍ ບໍ່ໄດ້ຍື່ນຄຳຮ້ອງຂໍຕໍ່ອາຍຸໃບຢັ້ງຢືນການແຈ້ງຂໍ້ມູນການເປັນເຈົ້າຂອງສິດການປົກປ້ອງ ພາຍຫລັງສິ້ນສຸດອາຍຸການປົກປ້ອງຂໍ້ມູນດັ່ງກ່າວ;
3. ການສິ້ນສຸດສິດຕໍ່ຊັບສິນທາງປັນຍາ;

## ໝວດທີ 3
## ການກວດກາສິນຄ້າລະເມີດສິດຕໍ່ຊັບສິນທາງປັນຍາ

**ມາດຕາ 12 ການກວດກາສິນຄ້າຂອງເຈົ້າໜ້າທີ່ພາສີ.**

ໃນເວລາດຳເນີນການກວດກາສິນຄ້າສົ່ງອອກ ແລະ ສິນຄ້ານຳເຂົ້າຕົວຈິງ, ເຈົ້າໜ້າທີ່ພາສີ ຕ້ອງກວດກາ ແລະ ສົມທຽບຂໍ້ມູນ ຕາມສະໂນດນຳສົ່ງ ບັນທຶກຂໍ້ມູນ ຂອງລັດຖະການພາສີ ກ່ຽວກັບຊື່ສິນຄ້າ, ຍີ່ຫໍ້, ທີ່ມາ, ມູນຄ່າ, ການ

ຫຸ້ມຫໍ່, ຄຸນນະພາບສິນຄ້າ, ເສັ້ນທາງການຂົນສົ່ງສິນຄ້າ ກັບ ຂໍ້ມູນທີ່ຢູ່ໃນຖານຂໍ້ມູນສຳນວນຄຳຮ້ອງຂໍກວດກາ ເພື່ອຊອກຫາສິນຄ້າທີ່ມີການລະເມີດສິດຕໍ່ ຊັບສິນທາງປັນຍາ ຫຼື ສິນຄ້າປອມແປງ;

**ມາດຕາ 13 ການຄວບຄຸມສິນຄ້າທີ່ສົງໃສວ່າລະເມີດສິດຕໍ່ຊັບສິນທາງປັນຍາ**

ກໍລະນີພົບເຫັນສິນຄ້າທີ່ສົງໄສວ່າມີການປອມແປງເຄື່ອງໝາຍການຄ້າ ຫຼື ລະເມີດລິຂະສິດ, ເຈົ້າໜ້າທີ່ພາສີສາມາດດຳເນີນການກັກສິນຄ້າດັ່ງກ່າວນັ້ນ ໄວ້ ສາມ (03) ວັນລັດຖະການ ເພື່ອດຳເນີນການສືບສວນ-ສອບສວນເພີ່ມເຕີມເຈົ້າຂອງສິນຄ້າ ແລະ ຕິດຕໍ່ຫາຜູ້ຖືສິດທັນທີ ແລ້ວແຈ້ງໃຫ້ເຈົ້າຂອງສິດຊາບ. ກໍລະນີມີຫຼັກຖານພຽງພໍ ທີ່ສົງໄສວ່າສິນຄ້າສົ່ງອອກ ຫຼື ສິນຄ້ານຳເຂົ້າເປັນສິນຄ້າລະເມີດ, ເຈົ້າໜ້າທີ່ພາສີມີສິດກັກ ສິນຄ້າດັ່ງກ່າວພາຍໃນໄລຍະເວລາ ສາມ (03) ວັນລັດຖະການ ເພື່ອແຈ້ງໃຫ້ເຈົ້າຂອງສິນຄ້ານຳຫຼັກຖານມາສະແດງວ່າສິນຄ້າດັ່ງກ່າວ ບໍ່ລະເມີດຊັບສິນທາງປັນຍາ ແລະ ຕິດຕໍ່ຫາຜູ້ຖືສິດ ເພື່ອກວດສອບ ແລະ ຢັ້ງຢືນຮ່ວມກັນວ່າສິນຄ້າດັ່ງກ່າວມີການລະເມີດ ຫຼື ບໍ່.

ຂັ້ນຕອນການຢັ້ງຢືນສິນຄ້າປອມແປງ ໃນຂະນະທີ່ກຳລັງກັກສິນຄ້າ ມີດັ່ງນີ້:

1. ຮຽກຮ້ອງໃຫ້ຜູ້ຖືສິດສະໜອງເອກະສານທີ່ກ່ຽວຂ້ອງ ເປັນຕົ້ນ ແຄັດຕາລັອກ, ບົດສະຫຼຸບການປະເມີນ, ເອກະສານຈາກຕ່າງປະເທດ, ຜົນການດຳເນີນຄະດີທີ່ຄ້າຍຄືກັນ ຫຼື ເຂົ້າມາຊີ້ແຈງວ່າສິນຄ້າດັ່ງກ່າວນັ້ນມີການລະເມີດ ຫຼືບໍ່.
2. ຖ້າຜູ້ຖືສິດຫາກຢືນຢັນວ່າ ສິນຄ້ານັ້ນແມ່ນສິນຄ້າທີ່ມີການປອມແປງ ແລະ ເຈົ້າຂອງສິນຄ້າເຫັນດີ ແມ່ນໃຫ້ຮິບ ແລະ ທຳລາຍສິນຄ້າດັ່ງກ່າວ. ຖ້າເຈົ້າຂອງສິນຄ້າຫາກບໍ່ເຫັນດີນຳຜົນການດຳເນີນການດັ່ງກ່າວ ຜູ້ຖືສິດຕ້ອງດຳເນີນການ ໄກ່ເກ່ຍກັບເຈົ້າຂອງສິນຄ້າ ແລະ ສາມາດນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຄຳແນະນຳສະບັບນີ້. ໃນລະຫວ່າງການກັກສິນຄ້ານັ້ນ ເຈົ້າຂອງສິນຄ້າ ແລະ ຜູ້ຍື່ນຄຳຮ້ອງຂໍກວດກາສິນຄ້າມີສິດເຂົ້າເຖິງ ແລະ ກວດກາສິນຄ້າ ເພື່ອເອົາຂໍ້ມູນ ແລະ ຫຼັກຖານເພີ່ມເຕີມ.
3. ຖ້າຜົນການກວດກາຊີ້ໃຫ້ເຫັນວ່າ ສິນຄ້າດັ່ງກ່າວບໍ່ແມ່ນສິນຄ້າປອມແປງ, ເຈົ້າໜ້າທີ່ພາສີຕ້ອງສືບຕໍ່ດຳເນີນຂັ້ນຕອນ ການແຈ້ງພາສີສຳລັບສິນຄ້າດັ່ງກ່າວ ຕາມລະບຽບການ.
4. ພາຍຫຼັງ ສາມ (03) ວັນ ທີ່ໄດ້ແຈ້ງໃຫ້ຜູ້ຖືສິດຮັບຊາບ ແຕ່ຜູ້ຖືສິດບໍ່ມີຄຳຕອບແກ່ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ພາສີຕ້ອງ ສືບຕໍ່ ດຳເນີນຂັ້ນຕອນການແຈ້ງພາສີສຳລັບສິນຄ້າດັ່ງກ່າວຕາມລະບຽບການ.

## ໝວດທີ 4
## ການປະຕິບັດສິດໂດຍໜ້າທີ່ (Ex-officio)

**ມາດຕາ 14 ການປະຕິບັດສິດໂດຍໜ້າທີ່ຂອງເຈົ້າໜ້າທີ່ພາສີ**

ອີງຕາມດຸນພິນິດຂອງຕົນ ເຈົ້າໜ້າທີ່ພາສີ ສາມາດໂຈະການແຈ້ງພາສີສຳລັບສິນຄ້ານຳເຂົ້າ ຫຼື ສົ່ງອອກ ທີ່ມີຫຼັກຖານເບື້ອງຕົ້ນ ຫຼື ມີເຫດຜົນທີ່ພຽງພໍວ່າ ມີສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ ຕາມມາດຕາ 160 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ພາຍຫຼັງມີການກັກສິນຄ້າແລ້ວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຄຳແນະນຳສະບັບນີ້.

**ມາດຕາ 15 ຂັ້ນຕອນພາຍຫຼັງການປະຕິບັດສິດໂດຍໜ້າທີ່ຂອງເຈົ້າໜ້າທີ່ພາສີ**

ພາຍຫຼັງມີການໂຈະການແຈ້ງພາສີສໍາລັບສິນຄ້າລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 13 ຂອງຄໍາແນະນໍານີ້ແລ້ວ, ເຈົ້າໜ້າພາສີຕ້ອງແຈ້ງໃຫ້ເຈົ້າຂອງສິນຄ້າ ແລະ ຜູ້ຖືສິດຊາບຢ່າງທັນການກ່ຽວກັບການໂຈະການແຈ້ງພາສີ ແລະ ເຈົ້າໜ້າທີ່ພາສີຕ້ອງຮຽກໃຫ້ຜູ້ຖືສິດສະໜອງຂໍ້ມູນເພີ່ມເຕີມ ເພື່ອຊ່ວຍໃຫ້ສາມາດລະບຸໄດ້ວ່າເປັນສິນຄ້າທີ່ມີການລະເມີດ ຫຼືບໍ່ ພາຍໃນສາມ (3) ວັນລັດຖະການ.

ໃນກໍລະນີທີ່ຜູ້ຖືສິດບໍ່ຕິດຕໍ່ກັບຄືນມາ ຫຼື ພິສູດໄດ້ວ່າສິນຄ້າດັ່ງກ່າວແມ່ນບໍ່ມີການລະເມີດສິດ, ເຈົ້າໜ້າທີ່ພາສີຕ້ອງສືບຕໍ່ດໍາເນີນການແຈ້ງພາສີສໍາລັບສິນຄ້າດັ່ງກ່າວ ແລະ ເຈົ້າໜ້າທີ່ພາສີຕ້ອງຖືກຍົກເວັ້ນຈາກຄວາມຮັບຜິດຊອບຕໍ່ມາດຕະການຊົດເຊີຍ ທີ່ເໝາະສົມ ໃນກໍລະນີທີ່ມີການດໍາເນີນການ ໂຈະການແຈ້ງສິນຄ້າ ໂດຍເຈຕະນາດີ.

## ໝວດທີ 5
## ການຄວບຄຸມສິນຄ້າລະເມີດສິດຕໍ່ຊັບສິນທາງປັນຍາ

**ມາດຕາ 16 ການຍື່ນຄໍາຮ້ອງຂໍກັກສິນຄ້າຊົ່ວຄາວ**

ເຈົ້າຂອງສິດ, ຜູ້ຖືສິດ ຫລື ຜູ້ໄດ້ຮັບອະນຸຍາດນໍາໃຊ້ ສາມາດຍື່ນຄໍາຮ້ອງຂໍກັກສິນຄ້າຊົ່ວຄ່າວ ພາຍຫຼັງໄດ້ຮັບການແຈ້ງຈາກເຈົ້າໜ້າທີ່ພາສີວ່າ ໄດ້ພົບເຫັນສິນຄ້າຕ້ອງສົງໃສ ຫລື ສິນຄ້າ ທີ່ລະເມີດສິດຕໍ່ຊັບສິນທາງປັນຍາຂອງຕົນ ຫຼື ກໍລະນີຜູ້ ເຈົ້າຂອງສິດ, ຜູ້ຖືສິດ ຫລື ຜູ້ໄດ້ຮັບອະນຸຍາດນໍາໃຊ້ ມີຂໍ້ມູນແຫຼ່ງຂ່າວທີ່ໜ້າເຊື່ອຖືວ່າ ການນໍາເຂົ້າ, ການສົ່ງອອກ ຫຼື ການຂົນສົ່ງຜ່ານແດນ ມີສິນຄ້າຕ້ອງສົງໃສ ຫລື ສິນຄ້າທີ່ລະເມີດຊັບສິນທາງປັນຍາຂອງຕົນ, ສາມາດຍື່ນຄໍາຮ້ອງຂໍກັກສິນຄ້າຊົ່ວຄາວ ຕໍ່ລັດຖະການພາສີ ໂດຍການນໍາໃຊ້ແບບຟອມຄໍາຮ້ອງຂໍກັກສິນຄ້າຊົ່ວຄາວຂັ້ນຕອນການແຈ້ງພາສີ ຕາມແບບຟອມ ຂອງກົມພາສີ ພ້ອມທັງວາງເງິນມັດຈໍາໃນມູນຄ່າ ສິບລ້ານກີບ (10.000.000 ກີບ).

ໃນກໍລະນີຮີບດ່ວນ ທີ່ບໍ່ສາມາດແຈ້ງເປັນລາຍລັກອັກສອນໄດ້ ເຈົ້າຂອງສິດ, ຜູ້ຖືສິດ ຫລື ຜູ້ໄດ້ຮັບອະນຸຍາດນໍາໃຊ້ ສາມາດແຈ້ງແບບປາກເປົ່າຕໍ່ລັດຖະການພາສີ ເພື່ອຂໍດໍາເນີນການ ແຕ່ຕ້ອງໄດ້ຍື່ນຄໍາຮ້ອງເປັນລາຍລັກອັກສອນ ພາຍໃນ 3 ວັນລັດຖະການ.

**ມາດຕາ 17 ການດໍາເນີນການພາຍຫລັງກັກສິນຄ້າຊົ່ວຄາວ**

ພາຍຫຼັງກັກສິນຄ້າຊົ່ວຄາວ ຕ້ອງມີການໄກ່ເກ່ຍກັບເຈົ້າຂອງສິນຄ້າ ຕາມຂະບວນການ ພາຍໃນ ສິບ (10) ວັນລັດຖະການ. ເຈົ້າໜ້າທີ່ພາສີມີສິດກັກສິນຄ້າໄວ້ 10 ວັນລັດຖະການ, ຖ້າເກີນກໍານົດເວລາດັ່ງກ່າວ ເຈົ້າໜ້າທີ່ມີສິດກັກສິນຄ້າຕໍ່ອີກກໍໄດ້ ແຕ່ຕ້ອງມີຫຼັກຖານວ່າກໍາລັງດໍາເນີນຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ ຫຼື ການຮ້ອງຟ້ອງ ຕໍ່ສານປະຊາຊົນ.

**ມາດຕາ 18 ການວາງເງິນຄໍ້າປະກັນເພີ່ມເຕີມ**

ໃນກໍລະນີມີການຍຶດສິນຄ້າຫຼາຍຈຸດ ຕາມຄໍາຮ້ອງສະບັບດຽວ, ລັດຖະການພາສີ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍວາງເງິນຄໍ້າປະກັນເພີ່ມ ຕາມຈໍານວນດ່ານທີ່ຈະມີການຍຶດສິນຄ້າ ໃນຈໍານວນເງິນທີ່ໄດ້ກໍານົດໄວ້ ມາດຕາ 16 ຂອງຄໍາແນະນໍາສະບັບນີ້ ພາຍໃນກໍານົດ ສອງ (2) ວັນ ລັດຖະການ ນັບແຕ່ວັນທີ່ກົມພາສີແຈ້ງໃຫ້ຜູ້ຮ້ອງຂໍຊາບ ເປັນຕົ້ນໄປ. ຖ້າວ່າຜູ້

ຮ້ອງຂໍ ບໍ່ໄດ້ວາງເງິນຄ້ຳປະກັນພາຍໃນເວລາກຳນົດໄວ້, ເຈົ້າໜາທີ່ພາສີຈະໄດ້ດຳເນີນການທີ່ໄດ້ກຳນົດ ໄວ້ໃນກົດໝາຍວ່າດ້ວຍພາສີ.

### ມາດຕາ 19 ສິນຄ້າທີ່ສົງໄສມີການລະເມີດແບບອຸດສາຫະກຳ

ອີງຕາມຄຳຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ໃນກໍລະນີເຈົ້າໜ້າທີ່ພາສີຫາກສົງໄສວ່າ ການປ່ອຍສິນຄ້າທີ່ກ່ຽວຂ້ອງກັບແບບອຸດສາຫະກຳ ເຂົ້າສູ່ວົງຈອນທາງການຄ້າ ແລະ ກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຫາກສິ້ນສຸດລົງ ໂດຍບໍ່ມີການຜ່ອນຜັນຊົ່ວຄາວໂດຍອີງການທີ່ກ່ຽວຂ້ອງ ແລະ ປະຕິບັດຕາມເງື່ອນໄຂສຳລັບການນຳເຂົ້າ ແລະ ການສົ່ງອອກ ເຈົ້າຂອງສິນຄ້າດັ່ງກ່າວ ຕ້ອງມີສິດຕໍ່ການປ່ອຍ ໂດຍການວາງເງິນຄ້ຳປະກັນໃນຈຳນວນທີ່ພຽງພໍ ເພື່ອປົກປ້ອງຜູ້ຖືສິດສຳລັບການລະເມີດແບບອຸດສາຫະກຳ. ການວາງເງິນຄ້ຳປະກັນດັ່ງກ່າວ ຕ້ອງບໍ່ກະທົບຕໍ່ການແກ້ໄຂທີ່ມີຕໍ່ຜູ້ຖືສິດ, ຊຶ່ງໝາຍຄວາມວ່າເງິນຄ້ຳປະກັນຕ້ອງຖືກສົ່ງຄືນ ໃນກໍລະນີຜູ້ຖືສິດຫາກບໍ່ສືບຕໍ່ນຳໃຊ້ສິດຂອງຕົນ ຢູ່ພາຍໃນກຳນົດເວລາທີ່ ເໝາະສົມ.

### ມາດຕາ 20 ການເກັບຮັກສາສິນຄ້າ

ໃນກໍລະນີຈຳເປັນຕ້ອງມີການເກັບຮັກສາ, ເຈົ້າຂອງສິນຄ້າມີສິດ ຂໍເອົາສິນຄ້າໄປເກັບຮັກສາໄວ້ຢູ່ສາງຂອງຕົນ ຫຼື ສະຖານທີ່ອື່ນທີ່ເໝາະສົມ ຕາມການພິຈາລະນາຂອງເຈົ້າໜ້າທີ່ພາສີ ແຕ່ຜູ້ຮ້ອງຂໍຕ້ອງໄດ້ວາງເງິນຄ້ຳປະກັນ ຄ່າພາສີອາກອນ ແລະ ພັນທະອື່ນໆ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ສິນຄ້າດັ່ງກ່າວຍັງຕົກຢູ່ໃນການຄວບຄຸມຂອງເຈົ້າໜ້າທີ່ພາສີ ເພື່ອຮັບປະກັນບໍ່ໃຫ້ສິນຄ້າ ດັ່ງກ່າວເຂົ້າສູ່ວົງຈອນການຄ້າ.

## ໝວດທີ 6
## ການຮ້ອງຟ້ອງຕໍ່ສານປະຊາຊົນ

### ມາດຕາ 21 ການຮ້ອງຟ້ອງຕໍ່ສານ

ໃນກໍລະນີ ມີການຮ້ອງຟ້ອງຕໍ່ສານ ແລະ ມີຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ບອກວ່າສິນຄ້າທີ່ເຈົ້າໜ້າທີ່ພາສີກັກໄວ້ນັ້ນ ແມ່ນສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ; ເຈົ້າຂອງສິນຄ້າຕ້ອງຖືກດຳເນີນຄະດີຕາມກົດໝາຍວ່າດ້ວຍພາສີ. ນອກຈາກ ນັ້ນແລ້ວ ເຈົ້າຂອງສິນຄ້າຕ້ອງໄດ້ຈ່າຍຄ່າຊົດເຊີຍອື່ນໆຕາມຄຳຕັດສິນຂອງສານ, ຖ້າມີເງິນຄ້ຳປະກັນຈາກເຈົ້າຂອງ ສິນຄ້າຕາມ ມາດຕາ 16 ວັກ 2 ຂອງ ຄຳແນະນຳສະບັບນີ້, ໃຫ້ເຈົ້າໜ້າທີ່ພາສີ ນຳໃຊ້ເງິນຄ້ຳປະກັນຂອງເຈົ້າຂອງສິນຄ້າ ມາຈ່າຍຊົດເຊີຍ ແລະ ຄ່າເສຍຫາຍອື່ນໆ ສ່ວນເງິນທີ່ເຫຼືອຈາກຄ່າຊົດເຊີຍ ຕ້ອງສົ່ງຄືນໃຫ້ແກ່ຜູ້ຮ້ອງຂໍ.

ເມື່ອມີຄຳຕັດສິນຂອງສານປະຊາຊົນວ່າ ສິນຄ້າທີ່ເຈົ້າໜ້າທີ່ພາສີຢຶດໄວ້ນັ້ນ ບໍ່ແມ່ນການຄ້າທີ່ລະເມີດເຄື່ອງ ໝາຍການຄ້າ ຫຼື ບໍ່ແມ່ນສິນຄ້າທີ່ລະເມີດລິຂະສິດ, ໃຫ້ເຈົ້າໜ້າທີ່ພາສີນຳເອົາເງິນຄ້ຳປະກັນຂອງຜູ້ຮ້ອງຂໍມາຈ່າຍຄ່າຊົດ ເຊີຍ ແລະ ຄ່າເສຍຫາຍອື່ນໆ ອັນເປັນຜົນຕໍ່ເນື່ອງຈາກການຢຶດສິນຄ້າຕາມຄຳຕັດສິນຂອງສານ ສ່ວນເງິນທີ່ເຫຼືອຈາກ ຄ່າຊົດເຊີຍຈະຖືກສົ່ງຄືນແກ່ຜູ້ຮ້ອງຂໍ.

### ມາດຕາ 22 ກໍລະນີບໍ່ມີການຮ້ອງຟ້ອງຕໍ່ສານ

ເມື່ອມີການຢຶດສິນຄ້າ, ພາຍໃນກຳນົດສິບ (10) ວັນ ລັດຖະການ, ຜູ້ຮ້ອງຂໍຕ້ອງຮ້ອງຟ້ອງຕໍ່ສານປະຊາຊົນ, ຖ້າ ກາຍກຳນົດດັ່ງກ່າວ ຫາກບໍ່ມີການຮ້ອງຟ້ອງເຈົ້າໜ້າທີ່ພາສີສາມາດປ່ອຍສິນຄ້າອອກໂດຍທັນທີ ແລ້ວຈະນຳເອົາເງິນ ຄ້ຳປະກັນຂອງຜູ້ຮ້ອງຂໍ ມາຈ່າຍຄ່າຊົດເຊີຍ ແລະ ຄ່າເສຍຫາຍອື່ນໆ ອັນເປັນຜົນເນື່ອງຈາກການຢຶດ ສິນຄ້າໃຫ້ເຈົ້າຂອງ ສິນຄ້າ.

ໃນກໍລະນີມີການຄ້ຳປະກັນຂອງເຈົ້າຂອງສິນຄ້າຕາມ ມາດຕາ 20 ຂອງ ຄຳແນະນຳສະບັບນີ້, ຖ້າເປັນ ການນຳ ເຂົ້າເພື່ອຊົມໃຊ້ທີ່ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ໃຫ້ເຈົ້າໜ້າທີ່ພາສີຫັກເອົາຄ່າພາສີ, ອາກອນ ແລະ ພັນທະອື່ນໆ ອອກແລ້ວມອບເຂົ້າງົບປະມານແຫ່ງລັດ ສ່ວນເງິນທີ່ເຫຼືອຈະຖືກສົ່ງຄືນແກ່ເຈົ້າຂອງສິນຄ້າ.

**ມາດຕາ 23 ການຖອນຄຳຮ້ອງຟ້ອງ**

ໃນກໍລະນີການສົມຍອມຄະດີ, ຜູ້ຮ້ອງຟ້ອງມີສິດຖອນຮ້ອງຟ້ອງ ກ່ອນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງ ສານປະຊາຊົນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການປະຕິບັດຕໍ່ສິນຄ້າທີ່ລະເມີດສິດຊັບສິນທາງປັນຍາ**

ສິນຄ້າລະເມີດສິດຊັບສິນທາງປັນຍາ ຕ້ອງຖືກທຳລາຍ ບົນພື້ນຖານການເຫັນດີຂອງຄູ່ກໍລະນີທັງສອງຝ່າຍ. ສ່ວນຄ່າໃຊ້ຈ່າຍໃນການທຳລາຍແມ່ນເຈົ້າຂອງສິນຄ້າເປັນຜູ້ຮັບຜິດຊອບ.

**ມາດຕາ 25 ການຈັດຕັ້ງປະຕິບັດ**

- ມອບໃຫ້ກົມພາສີ ເຜີຍແຜ່ການແນະນຳ ແກ່ເຈົ້າໜ້າທີ່ພາສີປະຈຳແຂວງ, ນະຄອນຫຼວງ, ດ່ານພາສີຊາຍແດນ ແລະ ຜູ້ປະກອບການທີ່ກ່ຽວຂ້ອງ ໃນການປະຕິບັດມາດຕະການປົກປ້ອງຊັບສິນທາງປັນຍາໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.
- ມອບໃຫ້ກົມພາສີ ອອກຄູ່ມືແນະນຳລະອຽດກ່ຽວກັບ ຂັ້ນຕອນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ເປັນ ລາຍລະອຽດ.
- ມອບໃຫ້ລັດຖະການພາສີແຕ່ລະຂັ້ນ ຈັດຕັ້ງການເຜີຍແຜ່ຄຳແນະນຳສະບັບນີ້ ໃຫ້ແກ່ຂະແໜງການກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນບົດແນະນຳຂອງກະຊວງ ການເງິນວ່າ ດ້ວຍມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາ ສຳລັບເຈົ້າໜ້າທີ່ພາສີ ສະບັບເລກທີ 1970/ກງ, ລົງວັນ ທີ 08 ກັນຍາ 2011 ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ລັດຖະມົນຕີ**

ບຸນໂຈມ ອຸບົນປະເສີດ